# ກ່ຳຫ້າເທງັນລ່າ



ໂດຍ ດວງເດືອນ ບຸນຍາວົງ

ແຕ້ມ ກອງມະນີ ປານມະໄລທອງ

# ກ່ຳພ້າເຫງັນລຳ

ໂດຍ ດວງເດືອນ ບຸນຍາວົງ
ແຕ້ມ ກອງມະນີ ປານມະໄລທອງ

**ຈັດພິມໂດຍ**
ສະມາຄົມສ້າງປຶ້ມຮູບໃຫ້ເດັກນ້ອຍລາວ ທີ່ປະເທດຍີ່ປຸ່ນ
ເພື່ອມອບໃຫ້ຫໍສະຫມຸດແຫ່ງຊາດ ເປັນຂອງຂວັນແກ່ເດັກນ້ອຍລາວທົ່ວປະເທດ

ກ່ຳພ້າເຫງັນລຳ
ໂດຍ ດວງເດືອນ ບຸນຍາວົງ
ແຕ້ມ ກອງມະນີ ປານມະໄລທອງ

ຈັດໜ້າ : ກອງ ບ.ກ. ວັນນະສິນ
ພິມທີ່ ວາລະສານວັນນະສິນ
ຕາມ ທບ 516/ ພປ 200393
ຈນ 10.000 ຫົວ

ພິມເທື່ອທີໜຶ່ງ 1993
ສະຫງວນລິຂະສິດ

# ຄຳນຳ

ດ້ວຍຈຸດປະສົງ ຢາກໃຫ້ເດັກນ້ອຍລາວ ມີປື້ມອ່ານຫລາຍຂຶ້ນ ເພື່ອເສີມສ້າງປັນຍາຄວາມຮູ້ ໃຫ້ສະຫລາດແຫລມຄົມ ແລະ ໄດ້ຮັບການຝຶກຝົນຫລໍ່ຫລອມ ໃຫ້ເປັນເຍົາວະຊົນທີ່ດີຂອງຊາດ.

ຫລາຍປີຜ່ານມາ ສະມາຄົມສົ່ງປື້ມຮູບ ໃຫ້ເດັກນ້ອຍລາວທີ່ປະເທດຍີ່ປຸ່ນ ໄດ້ພະຍາຍາມຂົນຂວາຍຊອກຫາທຶນຮອນ ເພື່ອຊຸກຍູ້ສົ່ງເສີມການອ່ານ ດ້ວຍຫລາຍຮູບຫລາຍສີ ເປັນຕົ້ນ ສະຫນັບສະຫນູນການເຄື່ອນໄຫວ ກິດຈະກຳການອ່ານ ແລະ ການຂຽນບົດເລື່ອງ ຂອງເດັກນ້ອຍຢູ່ທ້ອງຖິ່ນ, ການຈັດພິມບົດເລື່ອງ ແລະນິທານ ເພື່ອເຍົາໄວ ຕາມຫນັງສືພິມ ແລະວາລະສານຕ່າງໆ ສະຫນັບສະຫນູນໂຄງການຕູ້ປື້ມເຄື່ອນທີ່ ການຈັດພິມ ແລະ ແຈກຢາຍປື້ມ ຯລຯ ສະມາຄົມ ໄດ້ຈັດພິມປື້ມ ຫລາຍຫົວເລື່ອງ ເຊັ່ນ : " ລ່ອງໃຫ້ຖືກທາງ " " ຕຳນານດາວປະຫລາດ " ແລະ ອື່ນ ໆ.

"ກ່ຳພ້າເຫງັນລຳ" ທີ່ທ່ານພວມຈັບຢູ່ໃນມືນີ້ ແມ່ນຫນຶ່ງໃນຈຳນວນປື້ມເລື່ອງ ປະກອບຮູບແຕ້ມຊຸດໃຫມ່ ສຳລັບເດັກນ້ອຍລາວ ຊຶ່ງຈັດພິມໂດຍສະມາຄົມພວກເຮົາ ດ້ວຍຜົນງານການຂຽນ ຂອງ ດວງເດືອນ ບຸນຍາວົງ ແລະ ແຕ້ມໂດຍ ກອງມະນີ ປານມະໄລທອງ. ໂອກາດນີ້ ສະມາຄົມຂໍສະແດງຄວາມຂອບໃຈເປັນຢ່າງສູງ ຕໍ່ການປະກອບສ່ວນ ຂອງທ່ານທັງສອງດ້ວຍ.

ພວກເຮົາຫວັງວ່າ ປື້ມຫົວນີ້ ຄົງຈະມີຄຸນຄ່າ ດ້ານສຶກສາອົບຮົມແນວຄິດ ເພື່ອບັນລຸຕາມຈຸດປະສົງ ທີ່ວາງໄວ້.

ໂຕກຽວ, 8 ມີນາ 1993

ຈັນທະສອນ ອິນທະວົງ
ປະທານສະມາຄົມ



ປາງກ່ອນກີ້ ຍັງມີຊາຍຄົນຫນຶ່ງ ຊື່ວ່າ "ທອງ" ພໍ່ແມ່ຕາຍປະເສຍ ຕັ້ງແຕ່ຄາວຍັງນ້ອຍ ຈຶ່ງເປັນຄົນກຳພອຍ ອາໄສຢູ່ເປັນບ່າວນາ ນຳເຮືອນເສດຖີຄົນຫນຶ່ງ.

ເສດຖີຄົນນີ້ ມີລູກຊາຍອາຍຸ ຣຸ່ນຣາວຄາວດຽວກັບທອງ. ເດັກນ້ອຍທັງສອງ ໃຫຍ່ສູງມານຳກັນ ຫລິ້ນຫົວຢອກໃຍກັນ ແລະຮັກແພງກັນດີ. ແຕ່ທອງເປັນບ່າວຮັບໃຊ້ ສ່ວນລູກຊາຍເສດຖີ ເປັນນາຍ.



ພໍໃຫຍ່ສອນບ່າວ ພໍ່ເສດຖີ ໃຫ້ທັງສອງອອກໄປ
ຟັນໄຮ່ນຳກັນຢູ່ແຄມດົງ. ລູກຊາຍເສດຖີມັກຫລົບຫລີກ
ວຽກຫນັກ ວຽກຍາກ ເຊັ່ນກົ່ນຕໍ ຟັນໄມ້ ໂດຍຫນີໄປລົມ
ສາວ ຊ່ວຍຜູ້ສາວຫລົກຫຍ້າຢູ່ໄຮ່ໃກ້ໆ ປ່ອຍໃຫ້ກ່ຳພ້າ
ເຮັດວຽກຫນັກຜູ້ດຽວ ຊ້ຳບໍ່ພໍ ລູກຊາຍເສດຖີ ຍັງເອົາ
ຫໍ່ເຂົ້າໄປສູ່ຜູ້ສາວກິນ.





ຈຳເປັນທ້າວທອງ ຈຶ່ງໄດ້ເຂົ້າປ່າ ຫາໝາກໄມ້ກິນຕາງເຂົ້າ. ທ້າວຍາງເຂົ້າປ່າເລິກແລ້ວ ແຕ່ຍັງບໍ່ພົບພໍ້ຕົ້ນໄມ້ກິນໝາກຈັກຕົ້ນ. ຍາງຈົນອິດອອນ ຈຶ່ງພໍ້ຕົ້ນເດື່ອໃຫຍ່ ສູງຈົນແຫງນຄໍຕັ້ງບ່າ ຢູ່ປາຍຂອງມັນພຸ້ນ ມີໝາກເດື່ອສຸກແດງເຣື່ອຢູ່ໜ່ວຍໜຶ່ງ.



- ຕົ້ນໄມ້ຫມົດຕົ້ນ ມີຫມາກຫນ່ວຍດຽວ ! ທ້າວທອງຈົ່ມດ້ວຍຄວາມແປກໃຈ ແລ້ວກໍຕັດສິນໃຈ ປີນຂຶ້ນຕົ້ນເດື່ອໃຫຍ່ ໂອບກອດລຳງ່າ ຂຶ້ນປິດເອົາຫມາກເດື່ອໃຫຍ່ ທີ່ໃສ່ພົກຜ້າລົງມາຢ່າງຖະຫນອມແພງ.

ພວມຈະກັດກິນຫມາກເດື່ອພໍດີເຫງັນນ້ອຍໂຕຫນຶ່ງບໍ່ຮູ້ວ່າ ແລ່ນມາແຕ່ໃສ ສັກກະໂຍງໃສ່ຫນ່ວຍຫມາກເດື່ອ ທີ່ທອງຖືຢູ່ໃນມື.

ທ້າວກ່ຳພອຍຄຸບເຫງັນ ທັນຖືກຂາຫລັງ ທັງສອງຂອງມັນ.

- ຂໍຊີວິດອີນຊີ ຜູ້ຂ້າໄວ້ທ້ອນ ອ້າຍເອີຍ ! ເຫງັນນ້ອຍ ອ້ອນວອນ ກ່ຳພອຍດູຕົນມັນ ແລະ ຄິດວ່າ ມັນຄົງຫິວແຮງຄືກັນ ຈຶ່ງແບ່ງຫມາກເດື່ອ ຂອງຕົນໃຫ້ມັນກິນເຄິ່ງຫນຶ່ງ ແລະ ຕົນເອງກໍ່ກິນເຄິ່ງທີ່ເຫລືອ. ເຫງັນເວົ້ານຳກ່ຳພ້າວ່າ.

- ນ້ອງຈະບໍ່ລືມບຸນຄຸນ ຂອງອ້າຍຈັກເທື່ອ ! ມີເລື່ອງອັນໃດເອີ້ນຫານ້ອງໂລດ.

ນັບແຕ່ມື້ນັ້ນມາ ຫລັງຈາກເລີກວຽກຖາງໄຮ່ຊູດຕໍແລ້ວ ກ່ຳພອຍກໍມາຍັງຕົ້ນເດື່ອໃຫຍ່ ຫາຫມາກໄມ້ສຸກມາວາງເປັນກອງໆ ໄວ້ໃຫ້ເຫງັນກິນ. ສ່ວນຕົນເອງກໍປູຜ້າຂາວມ້າໃສ່ກ້ອງຮົ່ມໄມ້ ນອນພັກຜ່ອນ. ວັນຫນຶ່ງປາກົດວ່າ ໄດ້ຍິນສຽງຂັບລຳດັງອ້ອຍອິ່ນ ປະສານມາກັບສຽງລົມຕີຕ້ອງໃບໄມ້ ຢູ່ກາງປ່າ ເຮັດໃຫ້ທ້າວແປກໃຈ ແນມຫາຜູ້ລຳ ແຕ່ບໍ່ເຫັນໃຜ.



ຫລາຍເດືອນຫລາຍປີຜ່ານໄປ ພໍ່ເຖົ້າເສດຖີເຈັບປ່ວຍ ແລະ ລົ້ມຕາຍໄປ ປ່ອຍໃຫ້ລູກຊາຍ ເປັນພໍ່ເຈົ້າເຮືອນ ຄອບຄອງຊັບສົມບັດທັງໝົດ. ມື້ໜຶ່ງເຂົາບອກທອງວ່າ :

- ທອງເອີຍ ບັດນີ້ພໍ່ຂອງເຮົາກໍລົ້ມຫາຍຕາຍຈາກແລ້ວ ເຮົາຊິໄດ້ເອົາລູກເອົາເມຍ ມາຢູ່ຮ່ວມເຮືອນ ໃຫ້ໂຕ ຫາບ່ອນຢູ່ບ່ອນເຊົາໃຫມ່ສາຫລືຈະໄປທາງໃດກໍໄດ້!

ທ້າວກ່ຳພອຍທອງ ຟັງແລ້ວ ກໍເຂົ້າໃຈໂລດ ວ່າລູກຊາຍເສດຖີ ບໍ່ຕ້ອງການໃຫ້ຕົນຢູ່ຮ່ວມເຮືອນຕໍ່ໄປ ຈຶ່ງມ້ຽນເອົາເຄື່ອງຂອງໃສ່ຖົງພາຍ ສັ່ງລາເຈົ້າຂອງເຮືອນແລ້ວກໍຍ່າງເຂົ້າປ່າ ມຸ່ງໜ້າ ຫາຕົນເດືອໃຫຍ່ ບ່ອນເຫງັນນ້ອຍຢູ່.

ທອງເລົ່າເລື່ອງທຸກໃຈ ຂອງຕົນສູ່ເຫງັນນ້ອຍຟັງ.

- ອ້າຍເອີຍ, ໂຊກລາບບໍ່ຫອນແລນມາຫາ ພວກເຮົາຕ້ອງໄປຊອກຫາມັນເອງ ເຫື່ອແຮງຍັງມີຢູ່ ບໍ່ຕ້ອງຢ້ານຫຍັງ ນ້ອງຈະຂໍໄປເປັນຫມູ່ອ້າຍ.





ປຶກສາຕົກລົງກັນໄດ້ແລ້ວ ເຫງັນ ແລະທ້າວທອງ ກໍ່ອອກເດີນທາງ ບຸກປ່າຜ່າດົງໄປນຳກັນ. ຮອດທາງ ບ່ອນໃດຍາກ ຂ້າມນ້ຳ ຂ້າມຫ້ວຍ ທອງກໍ່ອຸ້ມເຈຍເອົາ ເຫງັນບໍ່ໃຫ້ມັນປຽກນ້ຳ. ຖືກຝົນຮຳ ທອງກໍ່ດັງໄຟໃຫ້ ຜີງອຸ່ນດີ. ທ້າວບົວລະບັດ ຊ່ອຍເຫລືອເຫງັນນ້ອຍທຸກ ຢ່າງ ຈົນມັນມີຄວາມສະທ້ານໃຈ ຂັບລຳເປັນທຳນອງ ອ້ອຍອິ່ນ ຟັງແລ້ວໜ້າສະອອນທີ່ສຸດ.

ກ່ຳພ້າທອງ ດີໃຈຫລາຍ ທີ່ເຫັນວ່າ ເຫງັນລຳເປັນ ນັບວ່າເປັນສິ່ງໜ້າງຶດງ້ແທ້ໆ.

ເດີນທາງມາຮອດບ້ານໜຶ່ງ ໄທບ້ານພວມຟາດເຂົ້າເຕັມລານ ບາງບ່ອນເປັນກອງເຫລືອງຕັ້ງຢາຍຕາມຕີນທົ່ງ.

ເມື່ອເຫັນກ່ຳພອຍອຸ້ມເຫງັນເຂົ້າໄປໄທບ້ານກໍແຕກຕື່ນຮ້ອງໄລ່ໜີທັນທີ.





- ຮີບເອົາເຫງັນຫນີໄວ, ຄະລຳ ບ່ອນນີ້ແມ່ນບ່ອນເຂົ້າ ບ່ອນນ້ຳ ຢ່າເອົາສັດເຖື່ອນເຂົ້າມາ.

ກ່ຳພອຍບອກຂະເຈົ້າວ່າ :

- ແຕ່ເຫງັນຂ້ອຍບໍ່ແມ່ນສັດເຖື່ອນ ມັນຮູ້ຂັບຮູ້ລຳໄດ້ !

ໄທບ້ານໄດ້ຍິນ ພາກັນຫົວຂວັນໂຄບໆ ບາງຄົນເວົ້າວ່າ :

- ໂອ້ຍບໍ່ເຄີຍໄດ້ຍິນ ເຫງັນຮູ້ຂັບຮູ້ລຳ.

- ຖ້າມັນລຳເປັນແທ້ເດ້ ພວກເຈົ້າຈະເອົາຫຍັງໃຫ້ຂ້ອຍ ? ທ້າວກ່ຳພ້າພະນັນ.

- ຊິເອົາເຂົ້າຟາດແລ້ວນີ້ໃຫ້ເຄິ່ງຫນຶ່ງ! ແຕ່ຖ້າມັນລຳບໍ່ເປັນ ພວກເຮົາຊິເອົາມັນລົງຫມໍ້ອອມໄດເນີ !

ທ້າວກ່ຳພ້າ ວາງເຫງັນລົງ ແລ້ວບອກໃຫ້ມັນລຳສູ່ໄຫບ້ານຟັງ. ພໍເຫງັນນ້ອຍອ້າປາກຂື້ນ ທຳນອງຂັບລຳອັນອອນຊອນ ກໍດັງອ້ອຍອິ່ນຕິດຕໍ່ບໍ່ເນືອງກັນ ຜູ້ຄົນທັງຫລາຍຟັງແລ້ວ ກໍລືມຄວາມອິດຄວາມເມື່ອຍ ບາງຄົນມ່ວນຫລາຍ ຫລົງຟ້ອນຍ້ອນໃສ່ກໍມີ ເຮັດໃຫ້ບັນຍາກາດມ່ວນຊື່ນ ມີຊີວິດຊີວາ.

ທ້າວກ່ຳພອຍ ໄດ້ເຂົ້າເປືອກ ຫລາຍເຫລັ້ມກວຽນ ແລ້ວກໍ່ກັບມາຢູ່ບ້ານ ພ້ອມດ້ວຍເຫງັນຂອງຕົນ. ນັບແຕ່ນັ້ນມາ ທ້າວກໍ່ບໍ່ອຶດເຂົ້າປາ ມີພໍກິນ ຄືບ້ານຄືເມືອງເພິ່ນ.





ກ່າວເຖິງ ລູກຊາຍເສດຖີ ໝູ່ເກົ່າຂອງທ້າວກ່ຳພ້າທອງ. ຫລັງຈາກພໍ່ຕາຍກໍ່ເອົາເມຍມາຢູ່ນຳ ບໍ່ພໍເທົ່າໃດປີທຸກຍາກລົງ ຍ້ອນເປັນນັກເລງພະນັນ ຫລິ້ນໂບກ ຫລິ້ນຖົ່ວ ທັງກິນເຫລົ້າເມົາຢາ ບໍ່ເປັນອັນເຮັດວຽກໄຮ່ ການນາ ເໝືອນແຕ່ກ່ອນ. ພໍໄດ້ຂ່າວວ່າທ້າວກ່ຳພອຍທອງ ມີເຂົ້າເຕັມເລົ້າເຕັມເຍຍ ມັນກໍ່ໄປຫາອ້ອນວອນຂໍຄວາມຊ່ອຍເຫລືອຈາກທ້າວ.

ທ້າວກ່ຳພ້າທອງ ຟັງຄວາມອ້ອນວອນ ຂອງລູກຊາຍເສດຖີ ແລ້ວກໍດູຕົນ ເພາະຕົນກໍ່ເຄີຍອາໄສ ເພິ່ງພາຊຸ້ມຊາຍຄາເຮືອນ ຂອງຕາເສດຖີຢູ່ຫລາຍປີ. ທ້າວກ່ຳພອຍເອົາເຫງິນໃຫ້ຢືມທັງບອກວ່າ ມັນຮູ້ຂັບລຳເປັນຄືຄົນໃຫ້ບົວລະບັດຮັກສາມັນດີໆ.





ລູກຊາຍເສດຖີໄດ້ຫງັນມາ ແລ້ວກໍ່ເອົາເຊືອກຜູກຄໍມັນຈູງຍ່າງມຸ່ງໜ້າສູ່ບ້ານໄກເມືອງຕ່າງໆ ບ່ອນຄິດວ່າມີເຂົ້ານ້ຳອຸດົມສົມບູນ. ແຕ່ຮອດທາງຍາກກັນດານເຂົາຊ້ຳລາກແກ່ຫງັນນ້ອຍ ທັງທຸບຕີ ເມື່ອເຫັນມັນບໍ່ຢາກຍ່າງ. ເຖິງຍາມຝົນຕົກ ແດດກ້າ ເຂົາກໍ່ບໍ່ເອົາຫົວຊາຫາບ່ອນຫລົບແດດບັງຝົນໃຫ້ມັນ. ເປັນແນວນີ້ ຫງັນກໍຈ່ອຍຜອມລົງ ຈົນຍ່າງເກືອບບໍ່ໄຫວ. ແຕ່ລູກຊາຍເສດຖີບໍ່ໄດ້ເອົາຫົວຊາ.

ໄປຮອດບ້ານແຫ່ງໜຶ່ງ ໄທບ້ານ ພວມຟາດເຂົ້າຢູ່ລານຕີນທົ່ງ ລູກຊາຍເສດຖີ ຈູງເຫງັນເຂົ້າໄປຫາ ໄທບ້ານກໍຮ້ອງດາ ທັງໄລ່ໜີ. ເຂົາຈຶ່ງເວົ້າອວດອ້າງວ່າເຫງັນຂອງຕົນ ຂັບລໍາເປັນຄືຄົນ ຢາກພະນັນ ເອົາເຂົ້າເປືອກຢູ່ລານ.

- ເອີ້ຄົນມັນລໍາເປັນ ລໍາມ່ວນແທ້ ຈະແບ່ງເຂົ້າຢູ່ລານໃຫ້ເຄິ່ງໜຶ່ງ !

ໄດ້ຟັງດັ່ງນັ້ນ ລູກຊາຍເສດຖີ ຈຶ່ງບອກໃຫ້ເຫງັນຂັບລໍາ ແຕ່ເຫງັນເມື່ອຍອອນທັງໜາວໄຂ້ສັ່ນທົດໆເຮັດແນວໃດມັນຈຶ່ງຂັບລໍາ ເປັນສຽງມ່ວນ ອອນຊອນອອກມາໄດ້.





ເມື່ອບໍ່ເປັນດັ່ງເວົ້າແລ້ວ ຊາວບ້ານກໍຮ້າຍດ່າແລະ ຂັບໄລ່ລູກຊາຍເສດຖີກັບເຫງັນ ໜີຈາກລານເຂົ້າ ທັງ ຫົວຂວັນໂຄບໆ. ລູກຊາຍເສດຖີໃຈຮ້າຍວູ່ໆ ລາກແກ ເຫງັນກັບມາເຮືອນ ເຫງັນເຈັບປ່ວຍຢູ່ແລ້ວ ເມື່ອຖືກ ລາກແກ່ ທໍລະມານຕື່ມ ມັນຈຶ່ງຂາດໃຈຕາຍ ລູກຊາຍ ເສດຖີ ເຫັນແນວນັ້ນຈຶ່ງຄົວເອົາຊີ້ນມາແຕ່ງກິນ.

ຫລາຍມື້ຜ່ານໄປ ບໍ່ເຫັນຫມູ່ ເອົາເຫງັນມາສົ່ງ ທ້າວກ່ຳພ້າຈຶ່ງໄປທວງຖາມຢູ່ເຮືອນ.

- ໂຕຂີ້ຕົວະເຮົາ ມັນບໍ່ຮ້ອງ ບໍ່ລຳອີ່ສັງຈັກຢ່າງ ເຮົາໂມໂຫ ຕີເອົາສາ ມັນເລີຍຕາຍຈ້ອຍ ... ເຫລືອແຕ່ດູກກອງຢູ່ແຈຮົ້ວພຸ້ນເດ້ !

ເມື່ອຮູ້ວາ ເຫງັນຕາຍຈາກແລ້ວ ທ້າວກ່ຳພ້າເສົ້າໂສກເສຍໃຈຫລາຍ ທ້າວຈຶ່ງໄປຄຸ້ຍເຂຍກອງດູກເຫງັນເກັບທ້ອນເອົາໄປຝັງດິນ ແລະ ເລືອກເອົາດູກຕອນຫນຶ່ງໄວ້.



ກ່ຳພ້າ ເອົາດູກຕ່ອນນັ້ນມາຝົນຖູແປງໃຫ້ເປັນຫວີ. ແປກປະຫລາດແທ້ໆ ເມື່ອທ້າວໃຊ້ຫວີດູກເຫງັນຫວີຜົມເທື່ອໃດ ກໍມີກ້ອນເງິນ ກ້ອນຄຳ ຕົກຫລົ່ນອອກມານຳທຸກເທື່ອ ເປັນແນວນີ້ ທ້າວກ່ຳພ້າ ຈຶ່ງມີເງິນມີຄຳ ປຸກສ້າງເຮືອນຊານ ຊື້ໄຮ່ນາ ເປັນທີ່ຊາລືກັນ.





ລູກຊາຍເສດຖີຮູ້ຂ່າວ ທັງເຫັນກັບຫູກັບຕາຕົນເອງວ່າ ກ່ຳພອຍທອງ ຮັ່ງມີເປັນດີຂຶ້ນແທ້ ເຂົາຈຶ່ງມາຫາກ່ຳພອຍ ສົ້ຖາມຫາສາເຫດ.

- ເຮັດແນວໃດ ໂຕຈຶ່ງຮັ່ງມີ ບໍ່ອຶດເງິນຄຳໃຊ້ຈ່າຍແນວນີ້ ?

- ບໍ່ມີຫຍັງດອກ, ພໍພຽງແຕ່ເຮົາເອົາດູກເຫງັນທີ່ໂຕຂ້າກິນຊີ້ນນັ້ນແລ້ວ ມາເຮັດຫວີໆຜົມ ກ້ອນເງິນກ້ອນຄຳກໍ່ຕົກຫລົ່ນອອກມາພ້ອມ.

ລູກຊາຍເສດຖີອ້ອນວອນ ຂໍຢືມຫວີດູກເຫງັນ ຂອງກ່ຳພ້າ ທັງທວງທາວເຖິງບຸນຄຸນວ່າ ພໍ່ຂອງຕົນເຄີຍລ້ຽງດູກ່ຳພ້າມາ ແຕ່ນ້ອຍຈົນໃຫຍ່ ກ່ຳພ້າ ຂືນບໍ່ໄດ້ຈຶ່ງເອົາຫວີດູກເຫງັນໃຫ້ ທັງບອກວ່າ ໃຫ້ຮັກສາດີໆ.



ລູກຊາຍເສດຖີ ໄດ້ຫວີດູກເຫງັນມາແລ້ວ ກໍເຂົ້າຫ້ອງສ້ວມ ອັດຜ້າກັ້ງຜ້າມ່ານດີໆ ເພາະຢ້ານຄົນອື່ນມາຈວບ. ພໍແຕ່ແຂ້ວຫວີຂູດຖືກຫນັງຫົວ ຂອງລູກຊາຍເສດຖີເທົ່ານັ້ນ ແທນທີ່ຈະມີກ້ອນເງິນກ້ອນຄຳ ຕົກຫລົ່ນລົງ ຊ້ຳມີແຕ່ຜົມເປັນປຸ້ມ ຫລົ່ນຂາດອອກ. ຫວີໄປຫວີມາ ຫລາຍເທື່ອຫົວກໍຫລ້ອນໂປກ ມີຜົມເປັນຍອມກະຫ່າງກະຣິ່ງ ແນມເບິ່ງເປັນຕາຢາກຫົວ.

ລູກຊາຍເສດຖີ ແນມເຫັນເງົາຕົນເອງ ໃນແວ່ນ ແລ້ວກໍ່ໂມໂຫ ຄຽດໃຫ້ຫວີ ຈຶ່ງໂຍນລົງພື້ນຢຽບປີ້ ຈົນແຂ້ວຫວີຫັກມຸ່ນ. ບໍ່ຫນຳໃຈ ມັນຍັງໂຍນດູກຫວີ ທີ່ເຫລືອ ເຂົ້າກອງໄຟອີກ.

ຫລາຍມື້ຜ່ານໄປ ທ້າວກຳພອຍ ບໍ່ເຫັນລູກຊາຍເສດຖີເອົາຫວີມາສົ່ງ ຈຶ່ງນຳໄປທວງຖາມຢູ່ເຮືອນ ກໍພົບວ່າ ຫມູ່ເກົ່າກາຍເປັນຄົນຫົວໂປກ ຫົວຫລ້ອນ.

- ຫວີອັບປີໂຕນັ້ນຕີ ! ບໍ່ເຫັນມີເງິນມີຄຳຕົກຫລົ່ນຄືໂຕວ່າ ມີແຕ່ຜົມເຮົານີ້ລະຫລົ່ນອອກໆ ຈົນຫົວຫລ້ອນແນວນີ້. ເຮົາໂມໂຫຢຽບມຸ່ນ ແລ້ວໂຍນເຂົ້າກອງໄຟພຸ້ນເດ້ !

ທ້າວທອງຟັງແລ້ວ ກໍເສຍໃຈແຮງ ທ້າວຫາໄມ້ໄປຄຸ້ຍເຂ່ຍກອງຂີ້ເຖົ່າ ພົບວ່າ ຍັງມີແຂ້ວຫວີ ລອດຈາກໄຟໄຫມ້ແຂ້ວຫນຶ່ງ ທ້າວເກັບເອົາມາ ຫໍ່ໃສ່ຜ້າມ້ຽນໄວ້ຢ່າງດີ.

ທ້າວເອົາແຂ້ວຫວີດູກເຫງັນ ທີ່ເຫລືອມາເຮັດໄມ້ຈີ້ມແຂ້ວ ເວລາຈີ້ມແຂ້ວບາດໃດ ກໍ່ມີກ້ອນຄຳກ້ອນເພັດຕິດອອກມານຳ.

ກຳພ້າຈຶ່ງຮັກສາໄມ້ຈີ້ມແຂ້ວດູກເຫງັນ ໄວ້ຢ່າງດີ ແລະ ນັບມື້ທ້າວກໍ່ຍິ່ງຮັ່ງມີ ໄຮ່ນາຮົ້ວສວນກວ້າງໃຫຍ່ຈົນໃຜໆ ກໍ່ງຶດງໍ້ອັດສະຈັນ.





ລູກຊາຍເສດຖີ ເຊິ່ງບາດນີ້ ກາຍເປັນຄົນຫົວຫລ້ອນ ທັງທຸກຍາກລຳບາກຫລາຍ ຮູ້ຂ່າວຈຶ່ງມາສືບຖາມຫາສາເຫດ ແລະຂໍຢືມໄມ້ຈີ້ມແຂ້ວດູກເຫງັນຂອງທ້າວທອງໄປອີກ. ກ່ຳພ້າເອົາໃຫ້ຢືມ ທັງບອກໃຫ້ຮັກສາດີໆ.

ແຕ່ເມື່ອທ້າວຫົວຫລ້ອນ ໃຊ້ໄມ້ຈີ້ມແຂ້ວດູກເຫງັນຈີ້ມແຂ້ວຍາມໃດ ແທນທີ່ຈະມີກ້ອນເພັດ ກ້ອນຄຳຕິດອອກມາ ມັນຊ້ຳມີແຕ່ແຂ້ວຂອງເຂົາເທົ່ານັ້ນ ຫລົ່ນອອກມາ. ຈີ້ມຫລາຍເທື່ອ ຫລາຍທີ ແຂ້ວກໍ່ຫລອນຈົນບໍ່ເຫລືອຈັກເຫລັ້ມ !



ນັບແຕ່ມື້ນັ້ນມາ ລູກຊາຍເສດຖີ ກໍ່ບໍ່ກ້າອອກນອກເຮືອນ ໄປຂໍຢືມຊັບສິນອັນໃດ ມາກໍ່ຜ້າອີກ ເຂົາກາຍເປັນຄົນຫົວຫລ້ອນ ຄາງວ່າບໍ່ມີແຂ້ວຈັກເຫລັ້ມ ຍ່າງໄປໃສ ມາໃສ ມີແຕ່ຄົນຫົວຂວັນ ຜູ້ເຖົ້າຜູ້ແກ່ ຊີ້ບອກລູກບອກຫລານວ່າ ນີ້ແລ້ວຄົນໂລບມາກໂລພາ. ສ່ວນທ້າວກໍ່າພອຍ ກໍຮັ່ງມີຢູ່ເຢັນເປັນສຸກ ຊ່ວຍເຫລືອຜູ້ທຸກຍາກລໍາບາກ ສືບຕໍ່ມາ ຈົນໃຜໆ ກໍຍ້ອງຍໍສັລະເສີນຮັກແພງ ແຕ່ງຕັ້ງໃຫ້ເປັນພໍ່ບ້ານ ຮັກສາການສືບຕໍ່ມານັ້ນແລ້ວ.

ອຸປະຖຳໂດຍ
ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ຂອງຍີ່ປຸ່ນ

ໂຄງການພິມເລື່ອງສຳລັບເດັກ

Sponsored by
ASSOCIATION FOR SENDING BOOKS
TO LAO CHILDREN OF JAPAN